ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 2109/ກປ

ນະຄອນຫຼວງວຽງຈັນ, ວັນທີ 27 APR 2016

# ຄຳສັ່ງ

## ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ໃນການນຳໃຊ້ມາດຕະການສຸຂານາໄມພືດ ເພື່ອແກ້ໄຂຕໍ່ການແຈ້ງເຕືອນຂອງສະຫະພາບເອີຣົບ (EU)

- ທ່ານ ຫົວໜ້າກົມປູກຝັງ;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ;
- ທ່ານ ຫົວໜ້າດ່ານປ້ອງກັນພືດ.

- ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມໜັງສືສະເໜີຂອງກົມປູກຝັງ ເລກທີ 0769/ກປຝ, ລົງວັນທີ 18 ເມສາ 2016.

ໃນໄລຍະຜ່ານມາ, ສປປ ລາວ ໄດ້ສົ່ງອອກຜະລິດຕະພັນສິນຄ້າກະສິກຳ ໂດຍສະເພາະຜະລິດຕະພັນພືດໄປຍັງບັນດາປະເທດໃນພາກພື້ນ ແລະສາກົນ ນັບມື້ມີທ່າອ່ຽງເພີ່ມຂຶ້ນ, ອັນທີ່ພົ້ນເດັ່ນ ພວກເຮົາສາມາດເຈາະເຂົ້າຕະຫຼາດສະຫະພາບເອີຣົບ (EU) ໄດ້, ສ້າງລາຍຮັບຈຳນວນບໍ່ໜ້ອຍໃຫ້ແກ່ຜູ້ຜະລິດ ແລະຜູ້ປະກອບການ; ແຕ່ຕົກມາໃນທ້າຍປີ 2012 ມາຮອດປະຈຸບັນນີ້, ພວກເຮົາ ໄດ້ຖືກແຈ້ງເຕືອນກ່ຽວກັບບັນຫາສັດຕູພືດຕິດແປດຈາກສະຫະພາບເອີຣົບ (EU) ເຖິງ 130 ຄັ້ງ ແລະຮ້າຍແຮງໄປກວ່ານັ້ນ ໃນຕົ້ນປີນີ້ (2016) ມີ 4 ກຸ່ມພືດ ຄື: ກຸ່ມຜັກບົວລະພາ (Basil, *Ocimum* spp), ກຸ່ມຜັກຫອມເປ (Maxican coriander, *Eryngium* spp), ກຸ່ມໝາກເຜັດ (Peppers, *Capsicum* sp) ແລະກຸ່ມຜັກອີເລີດ (Chaphu, *Piper* spp) ຖືກສະຫະພາບເອີຣົບ (EU) ຫ້າມສົ່ງອອກ ແລະນຳເຂົ້າ ໄປຍັງສະຫະພາບເອີຣົບ (EU). ສາເຫດຕົ້ນຕໍ ກໍຍ້ອນວ່າ: ຜະລິດຕະພັນພືດຜັກ ຈາກ ສປປ ລາວ ທີ່ສົ່ງເຂົ້າບັນດາປະເທດເອີຣົບ ມີສັດຕູພືດຕິດແປດໄປນຳ ແລະມີສານພິດຕົກຄ້າງໃນພືດ ແລະຜະລິດຕະພັນພືດ ເກີນຄ່າມາດຕະຖານກຳນົດ.

ສະນັ້ນ, ຖ້າພວກເຮົາບໍ່ມີມາດຕະການແກ້ໄຂຕໍ່ການແຈ້ງເຕືອນດັ່ງກ່າວແລ້ວ ພວກເຮົາກໍຈະຖືກ ສະຫະພາບເອີຣົບ (EU) ນຳໃຊ້ມາດຕະການຫ້າມນຳເຂົ້າພືດ ແລະຜະລິດຕະພັນພືດຈາກ ສປປ ລາວ ຄືກັນກັບການຫ້າມ 4 ກຸ່ມພືດດັ່ງກ່າວເທິງນັ້ນ, ເຮັດໃຫ້ພາບພົດ ບົດບາດການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ລວມທັງລາຍຮັບຈາກການສົ່ງອອກຫຼຸດໜ້ອຍຖອຍລົງ. ເພື່ອແກ້ໄຂບັນຫາດັ່ງກ່າວ ໃຫ້ຕົກໄປຢ່າງຂາດຕົວນັ້ນ,

### ລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ:

1. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບກັບພາກສ່ວນ

ທີ່ກ່ຽວຂ້ອງ ປະຕິບັດເດັດຂາດ, ເຂັ້ມງວດບາງວຽກ ດັ່ງນີ້:

1.1. ຢຸດຕິການອອກ ໃບຢັ້ງຢືນສຸຂານາໄມພືດຊົ່ວຄາວໃຫ້ແກ່ບັນດາບໍລິສັດ ທີ່ຖືກແຈ້ງເຕືອນຈາກສະຫະພາບເອີຣົບ (EU) ຈົນກວ່າຈະມີການປັບປຸງ ແລະສອດຄ່ອງກັບມາດຕະການສຸຂານາໄມພືດຂອງສະຫະພາບເອີຣົບ (ບັນດາບໍລິສັດ ທີ່ຖືກແຈ້ງເຕືອນຈາກສະຫະພາບເອີຣົບ ໄດ້ຄັດຕິດມາພ້ອມນີ້);

1.2. ຊີ້ນໍາພະນັກງານ ແລະເຈົ້າໜ້າທີ່ປ້ອງກັນພືດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ແລະພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ສະກັດກັ້ນ ແລະຫ້າມອອກໃບຢັ້ງຢືນສຸຂານາໄມພືດ ໃຫ້ພືດ ແລະຜະລິດຕະພັນພືດ ທີ່ແອບອ້າງ ຫຼືປອມແປງແຫຼ່ງກໍາເນີດຈາກ ສປປ ລາວ ເພື່ອສົ່ງອອກທີ່ບໍ່ຖືກຕ້ອງຕາມກົດໝາຍວ່າດ້ວຍການປ້ອງກັນພືດ, ດໍາລັດແນະນໍາປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ແລະມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ສະບັບທີ 7 ແລະ 12 (ISPMs 7 ແລະ 12);

1.3. ສືບຕໍ່ຊີ້ນໍາ ຂະແໜງປູກຝັງ ແລະຫ້ອງການກະສິກໍາ ແລະປ່າໄມ້ປະຈໍາເມືອງ ໃນການໂຄສະນາເຜີຍແຜ່ບັນດານິຕິກໍາ ແລະເງື່ອນໄຂການນໍາເຂົ້າພືດ ແລະຜະລິດຕະພັນພືດຂອງ ສະຫະພາບເອີຣົບ (EU) ໃຫ້ຜູ້ສົ່ງອອກພືດ ແລະຜະລິດຕະພັນພືດ ໄດ້ຮັບຮູ້, ເຂົ້າໃຈ ແລະສາມາດຈັດຕັ້ງໄດ້ຢ່າງຖືກຕ້ອງ.

2. ໃຫ້ ກົມປູກຝັງ ສືບຕໍ່ເປັນໃຈກາງປະສານສົມທົບກັບອົງການຈັດຕັ້ງສາກົນ ເພື່ອແກ້ໄຂບັນຫາດັ່ງກ່າວ ລວມທັງຊຸກຍູ້ ແນະນໍາບັນດາບໍລິສັດທີ່ຖືກແຈ້ງເຕືອນຈາກສະຫະພາບເອີຣົບ (EU) ໃຫ້ສາມາດສົ່ງອອກໄປຍັງ ສະຫະພາບເອີຣົບ (EU) ໄດ້ຢ່າງຖືກຕ້ອງ;

3. ໃຫ້ ກົມປູກຝັງ ລາຍງານຄວາມຄືບໜ້າໃນການແກ້ໄຂບັນຫາດັ່ງກ່າວ ໃຫ້ອົງການປ້ອງກັນພືດຂອງ ສະຫະພາບເອີຣົບ (EU), ພ້ອມທັງຜັນຂະຫຍາຍຄໍາສັ່ງສະບັບນີ້ ອອກເປັນຄໍາແນະນໍາ ແລະປຶ້ມຄູ່ມືວິຊາການ ເປັນອັນລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

4. ໃຫ້ ພະແນກກະສິກໍາ ແລະປ່າໄມ້ປະຈໍາແຂວງ, ນະຄອນຫຼວງວຽງຈັນ ກວດກາຄືນ ລະບົບການກວດກາ ແລະຢັ້ງຢືນສຸຂານາໄມພືດຂອງພະນັກງານ, ເຈົ້າໜ້າທີ່ປ້ອງກັນພືດ ແລະບໍລິສັດທີ່ສົ່ງອອກ ເພື່ອລາຍງານ ກະຊວງກະສິກໍາ ແລະປ່າໄມ້ ຮັບຊາບພາຍໃນກາງເດືອນ ມິຖຸນາ 2016, ຖ້າພົບເຫັນມີການກະທໍາຜິດ ແມ່ນໃຫ້ດໍາເນີນມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008 ແລະກົດໝາຍອື່ນທີ່ກ່ຽວຂ້ອງ;

5. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ໃນການຈັດຕັ້ງປະຕິບັດຕົວຈິງ, ຫາກພົບບັນຫາຫຍຸ້ງຍາກທີ່ບໍ່ສາມາດແກ້ໄຂໄດ້ ໃຫ້ລາຍງານການນໍາກະຊວງກະສິກໍາ ແລະປ່າໄມ້ ເພື່ອຫາວິທີແກ້ໄຂຢ່າງທັນການ.

ລັດຖະມົນຕີກະຊວງກະສິກໍາ ແລະປ່າໄມ້

ດຣ. ເພັດ ພົມພິພັກ

<u>ສໍາເນົາສົ່ງ</u>:

1. ທ່ານ ຮອງລັດຖະມົນຕີ ທ່ານລະ 01 ສະບັບ (ເພື່ອຊາບ);
2. ຫ້ອງວ່າການປົກຄອງແຂວງ, ນວ ບ່ອນລະ 01 ສະບັບ (ເພື່ອຊ່ວຍຊີ້ນໍາ);
3. ບັນດາກົມ, ສະຖາບັນອ້ອມຂ້າງກະຊວງ ບ່ອນລະ 01 ສະບັບ (ເພື່ອຊາບ);
4. ຫ້ອງການ ກະຊວງການຕ່າງປະເທດ 01 ສະບັບ (ເພື່ອຊາບ);
5. ຫ້ອງການ ກະຊວງອຸດສາຫະກໍາ ແລະການຄ້າ 01 ສະບັບ (ເພື່ອຊາບ);
6. ຫ້ອງການ ກະຊວງການເງິນ 01 ສະບັບ (ເພື່ອຊາບ);
7. ຫ້ອງວ່າການ ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ (ເພື່ອຊາບ);
8. ຫ້ອງການ ກະຊວງສາທາລະນະສຸກ 01 ສະບັບ (ເພື່ອຊາບ);
9. ສະພາອຸດສາຫະກໍາ ແລະ ການຄ້າແຫ່ງຊາດ 01 ສະບັບ (ເພື່ອຊາບ);
10. ຂະແໜງປູກຝັງແຂວງ, ນວ ບ່ອນລະ 01 ສະບັບ (ເພື່ອປະຕິບັດ);
11. ດ່ານສາກົນ ບ່ອນລະ 01 ສະບັບ (ເພື່ອຊີ້ນໍາ);
12. ເກັບມ້ຽນ 01 ສະບັບ

## ເອກະສານຄັດຕິດ

## ບັນຊີລາຍຊື່ບໍລິສັດ ທີ່ຖືກແຈ້ງເຕືອນຈາກສະຫະພາບເອີຣົບ

1) HONG NGOC IMPORT CO. LTD
2) STATE COMMERCE FOOD STUFF ENTERPRISE
3) P.K.S. PHETKHAMSAY IMPORT-EXPORT CO.LTD
4) DELIVER ORIENTAL LAO IMPORT-EXPORT SOLE LIMITED
5) LAO GREEN VEG SOLE CO., LTD
6) SANGA KEO BOUNPHANH LAO IMPORT-EXPORT CO., LTD
7) MEUANG KAO EXPORT CO. LTD
8) PASONG CHLERNXAY GARDENERS PROMOTION
9) GLORY FRESH AGRICULTURE EXPORT-IMPORT SOLE CO. LTD
10) PV FRUIT AND VEGETABLES IMPORT LTD
11) PANIPHONE TRADE IMPORT-EXPORT SAYABOURY
12) HOUAY HEE TRADING SOLE CO., LTD
13) NAKHON COMPANY,
14) BUA PHAN LAO IMPORT-EXPORT CO., LTD
15) HEADFLY TRADE CO. LTD

## ກຸ່ມພືດທີ່ຖືກແຈ້ງຫ້າມສົ່ງອອກຈາກ ສປປ ລາວ ໄປຍັງສະຫະພາບເອີຣົບ

1. ກຸ່ມຜັກບົວລະພາ (Basil, *Ocimum* spp)
2. ກຸ່ມຜັກຫອມເປ (Maxican coriander, *Eryngium* spp.)
3. ກຸ່ມໝາກເຜັດ (Peppers, *Capsicum* sp.)
4. ກຸ່ມຜັກອີ່ເລີດ (Chaphu, Piper spp.)